ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ 0005 /ກປ

ນະຄອນຫຼວງວຽງຈັນ, ວັນທີ 09 JAN 2012

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍການຄຸ້ມຄອງ ແລະການນຳໃຊ້ເຄື່ອງຈັກຕັດໄມ້

- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2006;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ, ລົງວັນທີ 22 ກັນຍາ 2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງປ່າໄມ້, ປົກປັກຮັກສາ ແລະການປະສານງານການຄຸ້ມຄອງປ່າໄມ້ ແລະທຸລະກິດໄມ້.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ການນຳເຂົ້າ, ການຊື້-ຂາຍ, ການສົ່ງອອກຄືນ, ການມີໄວ້ໃນຄອບຄອງ, ການຄຸ້ມຄອງ ແລະການນຳໃຊ້ເຄື່ອງຈັກຕັດໄມ້, ລວມທັງອາໄຫຼ່ ຫຼືສ່ວນປະກອບ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

### ມາດຕາ 2. ເຄື່ອງຈັກຕັດໄມ້

ເຄື່ອງຈັກຕັດໄມ້ ແມ່ນເຄື່ອງຈັກທຸກຊະນິດທີ່ໃຊ້ຕັດໄມ້, ປາຕົ້ນໄມ້ ແລະບັ່ນທ່ອນໄມ້ ລວມມີຈັກທີ່ແລ່ນດ້ວຍເຊື້ອເພີງ (ນ້ຳມັນ) ແລະຈັກທີ່ແລ່ນດ້ວຍໄຟຟ້າ ໂດຍໄດ້ຂຶ້ນທະບຽນ ແລະໄດ້ຮັບອະນຸຍາດໃຫ້ນຳໃຊ້ຈາກຂະແໜງກະສິກຳ ແລະປ່າໄມ້ ຕາມລະບຽບກົດໝາຍ.

### ມາດຕາ 3. ຫຼັກການ

ການຄຸ້ມຄອງ ແລະນຳໃຊ້ເຄື່ອງຈັກຕັດໄມ້ ຕ້ອງຮັບປະກັນບັນດາຫຼັກການພື້ນຖານ ດັ່ງນີ້:

1. ເຄື່ອງຈັກຕັດໄມ້ທຸກເຄື່ອງທີ່ຈະນຳໃຊ້ໃນ ສປປ ລາວ ຕ້ອງໄດ້ຮັບການຂຶ້ນທະບຽນນຳຂະແໜງກະສິກຳ ແລະປ່າໄມ້ ແລະຕ້ອງຮັບປະກັນ "ໜຶ່ງທະບຽນຕໍ່ ໜຶ່ງເຄື່ອງຈັກ";

2. ການນຳເຂົ້າ ຫຼືສົ່ງອອກຄືນເຄື່ອງຈັກຕັດໄມ້, ລວມທັງອາໄຫຼ່ ຫຼືສ່ວນປະກອບ ຕ້ອງໄດ້ຮັບການເຫັນດີຈາກກະຊວງກະສິກຳ ແລະປ່າໄມ້ກ່ອນ ຈຶ່ງສາມາດນຳເຂົ້າ ຫຼືສົ່ງອອກຄືນໄດ້ ບົນພື້ນຖານການດຸ່ນດ່ຽງພາຍໃນ;
3. ການນຳເຂົ້າ, ສົ່ງອອກຄືນ, ຊື້-ຂາຍ, ມີໄວ້ໃນຄອບຄອງ ແລະການນຳໃຊ້ເຄື່ອງຈັກຕັດໄມ້, ລວມທັງອາໄຫຼ່ ຫຼືສ່ວນປະກອບ ຕ້ອງບົນພື້ນຖານການຕິດຕາມ, ກວດກາ ຂອງເຈົ້າໜ້າທີ່ປ່າໄມ້ເປັນແຕ່ລະໄລຍະ.

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດ ແລະຜູ້ປະກອບການກ່ຽວການນຳເຂົ້າ, ຊື້-ຂາຍ, ສົ່ງອອກຄືນ, ມີໄວ້ໃນຄອບຄອງ, ນຳໃຊ້ເຄື່ອງຈັກຕັດໄມ້, ສ່ວນປະກອບ ແລະອຸປະກອນ ຢູ່ໃນ ສປປ ລາວ.

## ໝວດທີ 2
## ການຄຸ້ມຄອງ ແລະນຳໃຊ້ເຄື່ອງຈັກຕັດໄມ້

**ມາດຕາ 5. ການຄຸ້ມຄອງ ແລະນຳໃຊ້ເຄື່ອງຈັກຕັດໄມ້**

ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ຕ້ອງການດຳເນີນກິດຈະການຊື້-ຂາຍເຄື່ອງຈັກຕັດໄມ້, ລວມທັງອາໄຫຼ່ ຫຼືສ່ວນປະກອບ ຕ້ອງໄດ້ຮັບການເຫັນດີທາງດ້ານເຕັກນິກວິຊາການຈາກຂະແໜງກະສິກຳ ແລະປ່າໄມ້; ສຳລັບຜູ້ທີ່ມີໄວ້ໃນຄອບຄອງ ກໍຕ້ອງໄດ້ນຳໄປແຈ້ງ ຂຶ້ນທະບຽນນຳຂະແໜງການກະສິກຳ ແລະປ່າໄມ້.

ເຄື່ອງຈັກຕັດໄມ້ທີ່ໄດ້ນຳເຂົ້າມາແລ້ວ ຕ້ອງນຳເອກະສານໄປແຈ້ງຕໍ່ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເພື່ອຂຶ້ນທະບຽນອະນຸຍາດໃຫ້ນຳໃຊ້.

ກ່ອນຈະນຳໃຊ້ເຄື່ອງຈັກຕັດໄມ້ແຕ່ລະຄັ້ງ ຕ້ອງໄດ້ແຈ້ງຈຸດປະສົງຕໍ່ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເພື່ອກວດກາ ແລະຕິດຕາມ.
ເວລານຳໃຊ້ ຫຼືເຄື່ອນຍ້າຍເຄື່ອງຈັກຕັດໄມ້ແຕ່ລະຄັ້ງ ຕ້ອງຖືທະບຽນເຄື່ອງຈັກນັ້ນໆໄປພ້ອມ ເພື່ອສະດວກໃນການຕິດຕາມກວດກາຂອງເຈົ້າໜ້າທີ່ປ່າໄມ້.

ສຳລັບເຄື່ອງຈັກຕັດໄມ້, ລວມທັງອາໄຫຼ່ ຫຼືສ່ວນປະກອບ ທີ່ນຳເຂົ້າມາເພື່ອຮັບໃຊ້ໂຄງການຕ່າງໆ ທີ່ລັດຖະບານອະນຸມັດ ຫຼືມີສັນຍາຮ່ວມກັນນັ້ນ ຕ້ອງໄດ້ປະຕິບັດຕາມການຕົກລົງລະຫວ່າງສອງຝ່າຍ ບົນພື້ນຖານ ການຕິດຕາມກວດກາດ້ານເຕັກນິກຈາກຂະແໜງກະສິກຳ ແລະປ່າໄມ້.

**ມາດຕາ 6. ການຂຶ້ນທະບຽນເຄື່ອງຈັກຕັດໄມ້**

ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເປັນຜູ້ພິຈາລະນາອອກທະບຽນອະນຸຍາດໃຫ້ນຳໃຊ້.

ສຳລັບເຄື່ອງຈັກຕັດໄມ້ທີ່ໄດ້ນຳເຂົ້າ, ມີໄວ້ໃນຄອບຄອງ ແລະນຳໃຊ້ໃນໄລຍະຜ່ານມາ ທີ່ຍັງບໍ່ມີໃບທະບຽນແມ່ນໃຫ້ໄປຂຶ້ນທະບຽນນຳພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ໃຫ້ສຳເລັດພາຍໃນປີ 2012.

ການຂຶ້ນທະບຽນເຄື່ອງຈັກຕັດໄມ້ ແມ່ນອອກໃຫ້ເປັນສະເພາະແຕ່ລະໜ່ວຍຈັກ ແລະມີກຳນົດໃຊ້ໃນໄລຍະ 01 ປີ.

## ໝວດທີ 3
## ການນຳເຂົ້າ ແລະສົ່ງອອກຄືນເຄື່ອງຈັກຕັດໄມ້

**ມາດຕາ 7. ຂັ້ນຕອນການນຳເຂົ້າ ແລະສົ່ງອອກຄືນ**

ບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງທັງພາຍໃນ ແລະຕ່າງປະເທດ ທີ່ມີຈຸດປະສົງນຳເຂົ້າ ຫຼືສົ່ງອອກຄືນເຄື່ອງຈັກຕັດໄມ້, ລວມທັງອາໄຫຼ່ ຫຼືສ່ວນປະກອບ ຕ້ອງປະກອບເອກະສານຢ່າງຄົບຊຸດ ແລະຍື່ນຕໍ່ຂະແໜງການກະສິກຳ ແລະປ່າໄມ້ ກ່ອນການນຳເຂົ້າ ຫຼືສົ່ງອອກຄືນ ເພື່ອຄົ້ນຄ້ວາພິຈາລະນາ ແລະໃຫ້ແຈ້ງຕອບຢ່າງເປັນທາງການພາຍໃນ 10 ວັນລັດຖະການ.

ພາຍຫຼັງຂະແໜງການກະສິກຳ ແລະປ່າໄມ້ ເຫັນດີໃຫ້ນຳເຂົ້າ ຫຼືສົ່ງອອກຄືນເຄື່ອງຈັກຕັດໄມ້, ລວມທັງອາໄຫຼ່ ຫຼືສ່ວນປະກອບແລ້ວ, ຜູ້ປະກອບການຈຶ່ງສາມາດນຳໄປສະເໜີຕໍ່ຂະແໜງອຸດສາຫະກຳ ແລະການຄ້າ ເປັນຜູ້ພິຈາລະນາຕາມພາລະບົດບາດ.

ການຄົ້ນຄວ້າ ແລະພິຈາລະນາການນຳເຂົ້າ ຫຼືສົ່ງອອກຄືນເຄື່ອງຈັກຕັດໄມ້, ລວມທັງອາໄຫຼ່ ຫຼືສ່ວນປະກອບ ຕ້ອງຮັບປະກັນໃຫ້ກະທັດຮັດ, ບໍ່ມີຫຼາຍລາຍເຊັນ, ບໍ່ລຳອຽງ, ມີຄວາມໂປ່ງໃສ, ທ່ຽງທຳ ແລະບໍ່ເກີນສອງວັນລັດຖະການ;

**ມາດຕາ 8. ເງື່ອນໄຂການນຳເຂົ້າ ແລະສົ່ງອອກຄືນ**

ຜູ້ປະກອບການນຳເຂົ້າ ຫຼືສົ່ງອອກຄືນເຄື່ອງຈັກຕັດໄມ້, ສ່ວນປະກອບ ແລະອຸປະກອນ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ປະກອບເອກະສານນຳເຂົ້າ ແລະສົ່ງອອກຄືນຢ່າງຄົບຖ້ວນ;
2. ຜູ້ນຳເຂົ້າເພື່ອຈຸດປະສົງນຳໃຊ້ ຕ້ອງມີແຜນການນຳໃຊ້ຢ່າງລະອຽດ;
3. ແມ່ນຜູ້ທີ່ໄດ້ຮັບອະນຸຍາດດຳເນີນກິດຈະການດ້ານການຂຸດຄົ້ນໄມ້, ໂຮງງານປຸງແຕ່ງໄມ້ ຫຼືທຸລະກິດຊື້-ຂາຍເຄື່ອງຈັກຕັດໄມ້, ສ່ວນປະກອບ ແລະອຸປະກອນ ຈາກຂະແໜງການກ່ຽວຂ້ອງ.

**ມາດຕາ 9. ການປະກອບເອກະສານນຳເຂົ້າ ແລະສົ່ງອອກຄືນ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າ ແລະສົ່ງອອກຄືນເຄື່ອງຈັກຕັດໄມ້ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບສະເໜີ ຫຼືຄຳຮ້ອງ ຜ່ານພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ;
2. ໃບແຈ້ງລາຄາສິນຄ້າ;
3. ໃບທະບຽນວິສາຫະກິດ ຫຼືໃບອະນຸຍາດລົງທຶນ;
4. ໃບທະບຽນອາກອນ;
5. ໃບຢັ້ງຢືນກ່ຽວກັບມາດຕະຖານເຕັກນິກ;
6. ໃບອະນຸຍາດດຳເນີນກິດຈະການດ້ານປ່າໄມ້;
7. ແຜນການນຳໃຊ້.

## ໝວດທີ 4

## ຂໍ້ຫ້າມ ແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 10. ຂໍ້ຫ້າມ**

ຫ້າມບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດ, ລວມໝູ່ ຫຼືການຈັດຕັ້ງມີພຶດຕິກຳ ດັ່ງນີ້:

1. ນຳເຂົ້າ, ສົ່ງອອກ, ມີໄວ້ຄອບຄອງ ແລະວາງຂາຍເຄື່ອງຈັກຕັດໄມ້ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;
2. ນຳໃຊ້ເຄື່ອງຈັກຕັດໄມ້ທີ່ບໍ່ມີໃບທະບຽນຢ່າງຖືກຕ້ອງ;
3. ນຳໃຊ້ເຄື່ອງຈັກຕັດໄມ້ທີ່ປະກອບຂຶ້ນມາເອງ ໂດຍບໍ່ຖືກຕ້ອງຕາມເຕັກນິກວິຊາການ;
4. ນຳໃຊ້ທະບຽນເຄື່ອງຈັກຕັດໄມ້ບໍ່ຖືກກັບໜ່ວຍທີ່ນຳໃຊ້;
5. ພາກສ່ວນອື່ນທີ່ບໍ່ແມ່ນພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ອອກອະນຸຍາດຂຶ້ນທະບຽນຈັກຕັດໄມ້.

**ມາດຕາ 11. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼືການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແມ່ນຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼືລົງໂທດ ແລ້ວແຕ່ກໍລະນີໜັກ ຫຼືເບົາ ທີ່ໄດ້ລະບຸໄວ້ໃນມາດຕາ 123, 124, 125, 126, 127 ແລະມາດຕາ 128 ຂອງກົດໝາຍວ່າດ້ວຍປ່າໄມ້.

## ໝວດທີ 5

## ບົດບັນຍັດສຸດທ້າຍ

**ມາດຕາ 12. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການປົກຄອງທ້ອງຖິ່ນ, ຫົວໜ່ວຍທຸລະກິດ ລວມທັງບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ຈົ່ງຮັບຮູ້ ແລະໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

ມອບໃຫ້ກົມປ່າໄມ້, ກົມກວດກາປ່າໄມ້, ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເປັນເຈົ້າການເຜີຍແຜ່ເຊື່ອມຊຶມ, ຊຸກຍູ້ ແລະຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເພື່ອໃຫ້ໄດ້ຮັບຜົນດີ.

**ມາດຕາ 13. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້

ກະຊວງ ກະສິກຳແລະປ່າໄມ້ — ລັດຖະມົນຕີ

ດຣ. ຕິ ພົມມະສັກ

<u>ບ່ອນນຳສົ່ງ:</u>

| | |
|---|---|
| 1. ຫ້ອງວ່າການລັດຖະບານ | 01 ສະບັບ (ເພື່ອຊາບ); |
| 2. ກະຊວງອຸດສາຫະກຳ ແລະການຄ້າ | 01 ສະບັບ (ເພື່ອຊາບ); |
| 3. ກະຊວງການເງິນ | 01 ສະບັບ (ເພື່ອຊາບ); |
| 4. ຫ້ອງວ່າການປົກຄອງແຂວງ, ນະຄອນ ບ່ອນລະ | 01 ສະບັບ (ເພື່ອຊ່ວຍຊີ້ນຳ); |
| 5. ຫ້ອງການກະຊວງ ກປ | 01 ສະບັບ (ເພື່ອຊາບ); |
| 6. ກົມປ່າໄມ້ | 01 ສະບັບ (ເພື່ອຕິດຕາມ); |
| 7. ກົມກວດກາປ່າໄມ້ | 01 ສະບັບ (ເພື່ອຕິດຕາມ); |
| 8. ເກັບມ້ຽນ | 01 ສະບັບ. |